# ຈົດໝາຍຂ່າວ

ສະບັບ ປະຈຳໄຕມາດ ທີ່ 1 (ເດືອນ ມີນາ ຫາ ເດືອນ ກັນຍາ)

## ຈົດໝາຍ ຂ່າວ ສະມາຄົມອາດີດນັກສຶກສາລາວ ຈາກປະເທດຍີ່ປຸ່ນ (ສະບັບທົດລອງ)

元留学生

### ສ ອ ລ ຍ !!??

ບໍ່ງົງປານໃດຕີ໋ ! ແມ່ນບໍ່ !

ສ.ອ.ລ.ຍ, ຫຍໍ້ມາຈາກ ຄຳວ່າ ສະມາຄົມ ອາດີດ ນັກສຶກສາລາວ ຈາກປະເທດຍີ່ປຸ່ນ. ຄວາມຈິງ ສອລຍ ເປັນສະມາຊິກຮ່ວມໝູ່ນຶ່ງ ທີ່ຢູ່ພາຍໃຕ້ ການຊີ້ນຳ ຫຼື ຈະວ່າ ເປັນສະມາຄົມລູກ ຂອງສະມາຄົມມິດຕະພາບ ລາວ ຍີ່ປຸ່ນ ຂັ້ນສູນກາງ, ພາຍໃຕ້ຂໍ້ຕົກລົງ ອະນຸມັດສ້າງຕັ້ງ ເລກທີ /ສມລຍ

ເປັນຫຍັງຈຶ່ງເອີ້ນວ່າ **ສ ອ ລ ຍ** ຈະເວົ້າແບບງ່າຍໆ ຫຼືວ່າ ບາງທ່ານອາດຈະໄດ້ຍິນຄຳວ່າ " ນັກສຶກສາເກົ່າ/ນັກຮຽນເກົ່າ " ທີ່ປະເທດໃກ້ຄຽງເຮົາ ມັກໃຊ້ຄຳສັບນີ້. ແຕ່ພວກເຮົາບໍ່ຢາກເວົ້າຄຳວ່າ <u>ເກົ່າ</u> ແນວນີ້, ເພາະຢ້ານວ່າບາງຄົນຈະເອົາຟອຍປັດຂີ້ຝຸ່ນມາໃຫ້, ເພາະວ່າມັນເປັນຄືກັບວ່າ ອັນໃດອັນນຶ່ງທີ່ມີອາຍຸການມາ ຊ້ານານແລ້ວນີ້ລະ, ດັ່ງນັ້ນ ກໍເລີຍໃຊ້ຄຳວ່າ <u>**ອາດີດ**</u> ເລີຍ ສາເນະ ! ສ່ວນວ່າ ພາສາອັງກິດນັ້ນ ເວົ້າວ່າ **" Japan Alumni Of Laos "** **ຊຶ່ງຂຽນຊື່ຫຍໍ້ວ່າ** <u>**JAOL**</u> ຖ້າຈະເອົາແບບ ປະເທດໃກ້ຄຽງເຮົານີ້ ເພິ່ນຂຽນວ່າ Old Student Association of T..., ແຕ່ຖ້າເຮັດ ຊື່ໃນຮູບແບບຄ້າຍໆ ຄືເພິ່ນນີ້ ຢ້ານມີຄົນຈະແປເປັນ ພາສາລາວ ວ່າ ສະມາຄົມນັກສຶກສາເຖົ້າ...ຊັ້ນດອກ. ເອີ້ !! ເນາະ,,,ອີກຕື່ມອັນນຶ່ງນັ້ນ ຕົວຫຍໍ້ທີ່ເປັນພາສາລາວ ຄັນຈະເອົາ ບ່ອນຄຳວ່າ Of ອອກ ກໍຢ້ານວ່າມັນຈະເປັນຄຳ ຫຍໍ້ວ່າ **JAL**, ຮູ້ສຶກວ່າມັນຈະໄປຄືກັນກັບຊື່ບໍລິສັດ ສາຍການບິນຍີ່ປຸ່ນ ດີບໍ່ດີ ເຂົາຈະຫາວ່າ ເຮົາໄປຍາດຊື່ເຂົາເຈົ້າມາໃຊ້ ເອົາລະ ! ເວົ້າມ່ວນເວົ້າຫົວຊື່ໆດອກ ແຕ່ວ່າມັນອາດຈະ ປັດສະຈາກບໍ່ໄດ້ເຫດຜົນບາງຢ່າງທີ່ກ່າວມາຂ້າງເທິງນັ້ນ. ຄວາມຈິງຊື່ ແລະ ຕົວຫຍໍ້ທັງພາສາລາວ ແລະ ພາສາ ຍີ່ປຸ່ນທັງໝົດນີ້ ແມ່ນພວກເຮົາໄດ້ມີການຄິດຄົ້ນ ຄັ້ງເມື່ອ ຄະນະຕົວແທນນັກສຶກສາລາວ ໄດ້ໄປຮ່ວມກອງປະຊຸມອາດີດນັກສຶກສາອາຊຽນ ຈາກປະເທດຍີ່ປຸ່ນ ຊຶ່ງໄດ້ຈັດຂຶ້ນທີ່ປະເທດຟີລິປິນ ເມື່ອເດືອນ 7/2002. ຄັ້ງນັ້ນຜູ້ເຂົ້າຮ່ວມ ປະກອບມີ ທ່ານ ຄຳສິງ ໄຊຍະກອນ ອາດີດທ່ານທູດລາວ ປະຈຳຍີ່ປຸ່ນ, ທ່ານ ສິງຄຳ ແກ້ວວິໄລ ຮອງຫົວໜ້າກົມ ຈັດຕັ້ງມະຫາຊົນ ຄະນະ ພົວພັນຕ່າງ ປະເທດ ສູນກາງພັກ, ທ່ານ ບົວຄຳ ສີສຸລາດ ຫົວໜ້າພະແນກກະສິກຳ ແຂວງ ສະຫວັນນະເຂດ ອາດີດນັກສຶກສາ ສະໄໝລັດຖະບານເກົ່າ, ດຣ ພອນແກ້ວ ຈັນທະມາລີ ຫົວໜ້າພະແນກ ສົ່ງເສີມການຄົ້ນຄ້ວາວິທະຍາສາດ ມະຫາວິທະຍາໄລແຫ່ງ ຊາດລາວ ອາດີດນັກສຶກສາ ຈາກປະເທດຍີ່ປຸ່ນ. .. (ຕໍ່ ໜ້າ3)


| | | | | | |
|---|---|---|---|---|---|
| ຖ້າຈະຕິດຕໍ່ພວກເຮົາ | ພອນແກ້ວ | : 020.565 8430 | ພຸດທາ | : 020.551 6932 | **ຫ້ອງການ** : (ຊົ່ວຄາວ) |
| | ສີທັດຖະ | : 020.552 0007 | ທອງວັນ | : 020.552 2085 | ສູນພັດທະນາ ສັບພະຍາ |
| | ຄຳມ່ວນ | : 020.021 0333 | ດວງມາລາ | : 020.550 9118 | ກອນມະນຸດ ລາວ-ຍີ່ປຸ່ນ |
| | | | ປາຣິມາ | : 020.550 8861 | (ວິທະຍາເຂດດົງໂດກ ມ.ຊ) |

# ຈາກ ທ່ານ ປະທານ ສະມາຄົມມິດຕະພາບ

## ລາວ-ຍີ່ປຸ່ນ (ຂັ້ນສູນກາງ)

### ຕໍ່ ກັບ ສະມາຄົມອາດີດນັກສຶກສາລາວຈາກປະເທດຍີ່ປຸ່ນ

ພາຍຫຼັງ ຄະນະສະມາຄົມ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ໄດ້ຖືກຮັບຮອງ ເອົາ ຢ່າງເປັນທາງການແລ້ວ. ເພື່ອເປັນການສະເໜີຕົວ, ພວກເຮົາຕາງໜ້າໃຫ້ຄະນະສະມາຄົມຊຶ່ງປະກອບມີ ດຣ ພອນແກ້ວ ຈັນທະມາລີ ປະທານ ອສລຍ ເປັນຜູ້ນຳຄະນະ, ຄະນະປະທານ ຄົນອື່ນໆ ເຊັ່ນ ທ່ານ ຄຳມ່ວນ ຊິນສີຫາປັນຍາ, ທ່ານ ວັນທາ ແສງເມືອງ, ທ່ານ ວັນທອງ ເທບໄກສອນ ແລະ ນາງ ດວງມາລາ ກຸນຊະນະ ໄດ້ເຂົ້າຢ້ຽມເຄົາລົບທ່ານ ປະທານ ສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ(ສມລຍ) ດຣ ປອນເມກ ດາຣາລອຍ, ທີ່ຫ້ອງຮັບແຂກ ຂອງກະຊວງສາທາລະນະສຸກ.

ໃນໂອກາດນີ້, ດຣ ພອນແກ້ວ ຕາງໜ້າໃຫ້ອາດີດ ນັກສຶກສາລາວທີ່ຈົບຈາກປະເທດຍີ່ປຸ່ນ ແລະໃນນາມສະມາຄົມກໍໄດ້ກ່າວລາຍງານ ສະພາບນັກສຶກສາລາວ ທີ່ກຳລັງສຶກສາ ແລະ ຈົບຈາກຍີ່ປຸ່ນ, ຄວາມຈຳເປັນ ແລະຄວາມເປັນມາຂອງການກໍ່ຕັ້ງ ສະມາຄົມອາດີດ ນັກສຶກສາລາວຈາກ ຍີ່ປຸ່ນໃຫ້ທ່ານໄດ້ຮັບຊາບ. ພ້ອມດຽວກັນກໍໄດ້ລາຍງານສະພາບການເຄື່ອນໄຫວທີ່ມີລັກສະນະສາກົນ ແລະພາກພື້ນASEAN ອັນມີຄວາມ ກ່ຽວຂ້ອງກັບສະມາຄົມເຊັ່ນກັນ. ຫຼັງຈາກນັ້ນ ທ່ານ ກໍໄດ້ ໃຫ້ຄຳຊີ້ແນະ ຕັກເຕືອນອັນເຕັມໄປດ້ວຍຄວາມໝາຍອັນມີຄ່າສຳລັບພວກເຮົາໝົດທຸກຄົນ. ທ່ານໄດ້ຕີລາຄ່າ ສູງພາລະບົດບາດຂອງນັກສຶກສາພວກເຮົາ ຊຶ່ງລ້ວນແຕ່ເປັນນັກຮຽນທີ່ຖືກຄັດເລືອກມາຈາກ ບັນດານັກຮຽນຄະແນນດີເດັ່ນລະດັບແຖວໜ້າທົ່ວປະ ເທດ ຈຶ່ງໄດ້ໄປສຶກສາທີ່ປະເທດຍີ່ປຸ່ນ, ຈາກຄວາມດີເດັ່ນ ອັນນີ້ ທ່ານໄດ້ຝາກຄວາມຫວັງໃຫ້ນັກສຶກສາພວກເຮົາ ຈົ່ງຮັກສາຄວາມດີເດັ່ນນີ້ໄວ້ ແລະໃຫ້ສາມາດນຳເອົາຄວາມຮູ້ ທີ່ໄດ້ສຶກສາມານັ້ນ ເຂົ້າມາດັດໃຊ້ເຂົ້າໃນສະພາບຄວາມເປັນຈິງຂອງສັງຄົມລາວ ເພື່ອເປັນການ ປະກອບສ່ວນພັດທະນາຊາດລາວເຮົາ ໃຫ້ເກີດຜົນສູງ. ຕໍ່ກັບການເປັນສະມາຄົມນັ້ນ ເພິ່ນກໍ່ໄດ້ຕີລາຄາສູງເຖິງການອູ້ມຊູ ຂອງລັດບານກໍຄືປະຊາຊົນຍີ່ປຸ່ນທີ່ມີຕໍ່ປະຊາຊົນລາວ. ການເປັນສະມາຄົມນັ້ນຄົງຈະເປັນສະພານເຊື່ອມຕໍ່ທີ່ດີອີກອັນນຶ່ງ ເຮັດໃຫ້ການພົວພັນ ລະຫວ່າງລາວ ກັບຍີ່ປຸ່ນ ກໍຄື ກັບບັນດາພາກພື້ນ ASEA+3 ໃຫ້ມີບາດກ້າວຂະຫຍາຍຕົວຍິ່ງໆຂຶ້ນ.



ອີກອັນນຶ່ງ ຊຶ່ງເປັນຄຳຕັກເຕືອນທີ່ເພິ່ນຍໍ້າແລ້ວຍໍ້າອີກດ້ວຍນໍ້າສຽງຢ່າງຈະແຈ້ງນັ້ນ ພວກເຮົາພໍທີ່ຈະສະຫຼຸບໄດ້ດັ່ງນີ້ :

- ວຽກຂອງສະມາຄົມນັ້ນ ແມ່ນວຽກຂອງຄວາມຕື່ນຕົວເພື່ອສັງຄົມ ຖ້າບໍ່ມີຄວາມສາມັກຄີ ບໍ່ມີອຸດົມການເພື່ອສັງຄົມ ພວກເຮົາກໍ່ຈະບໍ່ສາມາດສ້າງປະໂຫຍດຫຍັງຂຶ້ນມາໄດ້.
- ເຮັດຫຍັງກໍ່ຢ່າໃຫ້ລືມລະບຽບຫຼັກການ ກົດໝາຍບ້ານເມືອງ ກຳໄດ້ແນວທາງຂອງພັກແລະລັດ, ແລະສິດຜົນປະໂຫຍດສ່ວນລວມເປັນສຳຄັນ.
- ໃຫ້ເອົາໃຈໃສ່ສຶກສາຮໍ່າຮຽນ ເອົາບົດຮຽນດ້ານດີຂອງຍີ່ປຸ່ນແລ້ວນຳມາປັບປຸງນຳໃຊ້ໃຫ້ແທດເໝາະກັບສັງຄົມລາວ.
- ເປັນສະມາຄົມ ຢ່າໄດ້ມີການຜິດຂ້ອງຕ້ອງຖຽງກັນ, ແບ່ງພັກແບ່ງພວກ ແລະຫຼີກລ່ຽງການຕີລະຄາຜູ້ອື່ນໄປແຕ່ດ້ານລົບ ໂດຍຂາດຄວາມສັດຈະວິພາກ.

ທັງໝົດນັ້ນ ມັນເປັນພຽງຄຳຕັກເຕືອນເລັກນ້ອຍຈາກຄວາມເປັນຫ່ວງເປັນເປັນໄຍອັນໝົດອົກໝົດໃຈຂອງທ່ານ,ແຕ່ນັ້ນມັນເປັນຄວາມໝາຍອັນໃຫຍ່ຫຼວງສຳລັບພວກເຮົາ.

(ຢ້ຽມຢາມເທື່ອນັ້ນ ພວກເຮົາບໍ່ມີຫຍັງມອບ ໃຫ້ທ່ານເລີຍ...)

(ຕໍ່ຈາກໜ້າປົກ)

ສະຫາຍ ສີທັດຖະ ລາຊະພົນ ອາດີດປະທານ ທັງເປັນເຈົ້າຂອງ ບໍລິສັດ ຈຳປາລາວ (ອາດີດນັກສຶກສາ). ເພາະວ່າ ໃນກອງປະຊຸມຄັ້ງນີ້, ພວກເຮົາຍັງບໍ່ທັນໄດ້ເປັນໜ່ວຍສະມາຄົມຄືປະຈຸບັນເທື່ອແຕ່ດ້ານນຶ່ງພວກເຮົາຈຳເປັນຕ້ອງມີຊື່ໃຫ້ຄະນະປະທານກອງປະຊຸມໃຫ້ແລ້ວກ່ອນສຳເລັດກອງປະຊຸມ...

ເປັນອັນວ່າ...ພວກສະຫາຍຄົງ ພໍໃຈສຳລັບຊື່ນີ້ ຢູ່ຕີ້ ນໍ !!!! ຕ້ອງຂໍໂທດນຳອ້າຍນ້ອງ ທັງໝົດທີ່ຕ້ອງໄດ້ຕັ້ງຊື່ນີ້ໄປຄືແນວນີ້. ...ຫຼືວ່າ ຜູ້ໃດມີຊື່ອື່ນທີ່ເໝາະສົມກ່ວານີ້ ກໍຂໍເຊີນໃຫ້ ການຊີ້ນຳ ເພື່ອນຳໄປສູ່ການປັ່ງນແປງ ແກ່ພວກເຮົາດ້ວຍ. ເຖິງຢ່າງໃດກໍດີ ຊື່ທາງການຂອງສະມາຄົມນັ້ນ ຍັງບໍ່ທັນໄດ້ຮັບຮອງເທື່ອ, ຍັງຕ້ອງການເວລາອີກຕື່ມເລັກນ້ອຍ... ຕື່ມ.





# ຜູ້ບຸກເບີກ ...ທຶນ Monbusho

ຜູ້ຂ່າວ ພອນແກ້ວ

ນີ້ ບໍ່ແມ່ນແຈ້ງຂ່າວ ມໍລະນະກຳ ດ້ວຍພະຍາດຂອງຜູ້ກ່ຽວເດີ້ !!! ແລະ ສອງຄົນໃນຮູບຂ້າງເທິງນີ້, ກໍບໍ່ແມ່ນການປະກາດຫາຄົນຮ້າຍກຳລັງຖືກຕາມຈັບເດີ້. ທັງສອງຄົນແມ່ນນັກສຶກສາລາວຮຸ່ນທຳອິດທີ່ໄດ້ ຮັບ ທຶນການ ສຶກສາໄປໄປຮຽນປະເທດຍີ່ປຸ່ນໃນຕົ້ນເດືອນ ເມສາ ປີ 1988. ສາເຫດທີ່ວ່າຮຸ່ນທຳອິດ, ກໍເພາະວ່າ ພາຍຫຼັງທີ່ປະເທດໄດ້ ຮັບ ການປົດປ່ອຍເປັນຕົ້ນມາ ຈົນຮອດປີ 1987 ບໍ່ໄດ້ມີນັກສຶກສາ ລາວເຮົາທີ່ໄປຮຽນທີ່ ປະເທດ ຊະກຸລະ ແດນປາດິບ ແຫ່ງນີ້...
ຈົ້ນຕໍ່ມາຮອດ ຕົ້ນປີ 1988 ເປັນປີ ທີ່ພວກຂົວຈັດໄທບັງອາດສ້າງເລື່ອງຢູ່ແຖວປາກລາຍ ພໍດີ, ໄຄແດ່ ທີ່ວ່າສະພາບການພົວພັນລາວຍີ່ປຸ່ນເວລານັ້ນ ກໍເລີ່ມມີການພົວພັນກັນດີຂຶ້ນ, ກະຊວງສຶກສາລາວເຮົາ ໄດ້ເລີ່ມຮັບເອົາທຶນການສຶກສາ "Monbusho " ຈາກປະເທດຍີ່ປຸ່ນ, ສອງຄົນໃນຮູບນັ້ນລະຖືວ່າເປັນຮຸ່ນບຸກເບີກກະວ່າໄດ້. ຫຼາຍຄົນກໍອາດຈະຮູ້ໜ້າຕາຂອງສອງ ຜູ້ບຸກເບີກນີ້ດີແລ້ວ, ແຕ່ບາງຄົນອາດຈະຍັງ. ດັ່ງນັ້ນກໍຂໍອະນຸຍາດແນະນຳຕົວພວກກ່ຽວເລີຍ, ຜູ້ເບື້ອງ ຊ້າຍ ແຊັມປາຍ ເພີຍເພັດ ສາດາວເຮືອງ ເວົ້າເລື່ອງການເຮັດວຽກຢູ່ໃສນັ້ນ ເພິ່ນຜູ້ນີ້ຂ້ອນ ຂ້າງຈະສັບສົນແດ່ຈັກໜ່ອຍ. ຄືວ່າ ຫຼັງຈາກຈົບ ມະຫາທີ່ Tokyo Unviversity of Agriculture and Engineering ແລ້ວເພິ່ນກໍ່ເຂົ້າເຮັດ ວຽກຢູບໍລິສັດ Fujitsu, ເຮັດໄດ້ເກືອບ 2ປີ ກໍເລີຍຄິດຮອດເມືອງລາວ ຫຼາຍໃນທີ່ສຸດກໍເລີຍກັບປະເທດຊາດ ບ້ານເກີດເມືອງນັ່ງ. ມາແລ້ວ ເຮັດວຽກຢູ່ບໍລິສັດລັດວິ ສະຫະກິດ ໂທລະຄົມລາວ, ຫຼັງຈາກນັ້ນຍ້າຍໄປທີ່ຄະນະ ວິສະວະກຳສາດ ມະຫາວິທະຍາໄລແຫ່ງຊາດລາວ, ມີຜົນງານຂຶ້ນມາ ກໍເລີຍຖືກໄປຮຽນຕໍ່ປະຣິຍາໂທທີ່ຍີ່ປຸ່ນ ອີກ, ແລະກັບມາເທື່ອນີ້ ເພິ່ນພັດປ່ຽນ ຊີວິດການເຮັດ ວຽກໄປເປັນນັກການທູດຊໍ້າ. ດຽວນີ້ ຮັບຜິດຊອບທີ່ໂຕະ ຍີປຸ່ນ ທີ່ຂຶ້ນກັບກົມອາຊີ ປາຊີຟິກ ກະຊວງການ ຕ່າງປະເທດ. ນອກຈາກ ເອີ້ນເພິ່ນວ່າເພີຍເພັດ,ໝູ່ຄູ່ທີ່ລື້ງເຄີຍ ກໍມັກເອີ້ນວ່າ ໂວຍວາຍ ! ເປັນຫຍັງຈຶ່ງ ເອີ້ນແນວນີ້, ເພາະເວລາເພິ່ນຊຶມໆ ແດ່ແລ້ວ ເພິ່ນຢາກ ໂວຍວາຍແດ່ຈັກໜ້ອຍຊັ້ນນ່າ, ທິດສະດີ ກໍຫຼາຍຂຶ້ນຜິດປົກກະຕິ... ແຕ່ວ່າ ອ້າຍເພີຍເພັດ ລາວໂວຍວາຍໄປຈັ່ງຊັ້ນລະລາວບໍ່ເຄີຍຖືຊາຫາເລື້ອງກັບຜູ້ໃດດອກ... ແລ້ວກໍແລ້ວໄປເລີຍ ວ່າຊັ້ນເທາະ.

ສ່ວນວ່າ ຜູ້ທາງດ້ານຂວນັ້ນ, ເບິ່ງມະລຶດພຶດພາດໄປ ຫຼາຍຄົນອາດຄຶດວ່າ ເປັນລູກຊອດ ເກັນຢາ ກໍເປັນໄດ້, ເພາະວ່າ ເພິ່ນເປັນຄົນຫົວກູດລື້ນບ້ານລື້ນເມືອງ. ຊື່ ແທ້ ເພິ່ນຊື່ວ່າ ອ.ຈ ພຸດທາ ເພັດໄບສີ ໃນໄລຍະທີ່ເພິ່ນໄປຮອດຍີ່ປຸ່ນ, ຢູ່ໂຮງຮຽນພາສາຍີ່ປຸ່ນນັ້ນ ເພິ່ນຈະມີໝູ່ຮັກແພງຂຶ້ນມາໃນທັນໃດໂລດ ຊຶ່ງແມ່ນຄົນ ປາປົວນິວກີເນ, ບໍ່ໃຫ້ເວົ້າເລີຍ ຫົວກູດຄືກັນອ້ອຍຕ້ອຍ. ຜູ້ນີ້ຂ້ອນຂ້າງຈະຕ່າງ ແລະພິເສດເພາະວ່າເປັນຄົນ ສະເໜ່

ແຮງ, ໄລຍະທີ່ຮຽນພາສາຍີປຸ່ນນັ້ນ ເຂົ້າໃຈກໍທຳທ່າວ່າ ບໍ່ເຂົ້າໃຈ ພາໂລຈົນ ວ່າ ອາຈານສາວ ຜູ່ບັກງາມໆ ທີ່ຊື່ວ່າ NAKAYAMA EmikoSensei ຈົນຕ້ອງນັ່ງເປື້ອລົງພື້ນຫ້ອງຮຽນ ແລ້ວຮ້ອງໃຫ້ຫຼາຍເທື່ອ ພຸ້ນໃດ. ບາງເທື່ອ ອາຈານ ແລະລູກສິດສອງຄົນນີ້ ຍັງພາກັນໄປ ' ເດໂຕະ ' ນຳກັນໃນທ້າຍອາທິດ ກໍຫຼາຍເທື່ອ, ແຕ່ລະເທື່ອຕ້ອງມີ ເລື່ອງ ງອນກັນ ເກີດຂຶ້ນເປັນປະຈຳ, ຈົນວ່າຂຶ້ນຫ້ອງຮຽນມື້ວັນຈັນເທື່ອໃດ ບັນຍາກາດຫ້ອງຮຽນ ຮູ້ສຶກວ່າສິມືດໆໂລດ.

ຫຼັງຈາກຮຽນຈົບຈາກໂຮງຮຽນ ພາສາຍີປຸ່ນແລ້ວ, ແຊັມປາຍຜູ້ນີ້ ກໍໄດ້ໄປຮຽນຕໍ່ທີ່ ມະຫາວິທະຍາໄລ ກະເສດ ແລະ ວິສະວະກຳ ໂຕກຽວ(ບອ່ນດຽວກັນກັບຜູ້ເບື້ອງຊ້າຍ). ຫຼັງຈາກຮຽນຈົບແລ້ວ, ແຊັມປາຍພຸດທາກໍເຂົ້າເຮັດວຽກ ທີ່ ບໍລິ ສັດ ຜູ້ຜະລິດ ພົກແຫຼວ(Liquid Cristal) ຊຶ່ງເປັນວັດຖຸເຕັກນິກ ສຳລັບເຮັດໜ້າຈໍ ໂທລະທັດ, ຄອມພິເຕີ ປະ ເພດ ໜ້າ ແບນ ຫັ້ນເດ. 2ປີປາຍເຮັດວຽກຢູ່ທີ່ນັ້ນ ຕໍ່ມາເພິ່ນກໍກັບຄືນປະເທດຊາດ,ໃນທີ່ສຸດກໍມາເຮັດວຽກຊ່ວຍ ບໍລິ ສັດກໍ່ສ້າງໂອບາຍາຊິ ໃນເວລາທີ່ມີການກໍ່ສ້າງສະໜາມບິນວັດໄຕ ຫຼັງໃໝ່. ຈາກນັ້ນ, ເພິ່ນກໍ່ປ່ຽນວຽກມາເຮັດ ຢູ່ທີ່ຫ້ອງ ການໄຈກ້າ ຄະນະວິສະວະກຳສາດ ມະຫາວິທະຍາໄລແຫ່ງຊາດລາວ ຈົນເຖິງປະຈຸບັນນີ້. ເລື່ອງລາວໂດຍຫຍໍ້ໆ ທີ່ພວກ ເຮົາເກັບມາໄດ້ກໍມີແຕ່ເທົ່ານັ້ນ...ມີຫຍັງສາມາດຕິດຕໍ່ຫາທັງສອງແຊັມປາຍໄດ້... ...ແຕ່ຖ້າຢາກໄດ້ອັນເດັດໆ ນຳເພິ່ນ ຢ່າລືມຖືແກ້ວສີ່ທ່າມໄປນຳແດ່ເດີ້.

# ກິລາ ສຳພັນ



ບໍ່ທຳມະດາເດີ້ ຄົນລາວເຮົາຖ້າຈະເວົ້າໄປແລ້ວ ຄື ດັ່ງຫຼາຍຄົນເວົ້າຫັ້ນລະ ຖ້າຈະຫຍຸບໄປແລ້ວກໍຄື ເປັດ ນັ້ນເອງວ່າຊັ້ນເດ້. ບິນກໍໄດ້, ຍ່າງກໍເປັນ, ມຸດນ້ຳ ກໍດີ... ອັນໃດກໍບໍ່ນ້ອຍໜ້າ. ມື້ວັນເສົາທີ່ 15/03 ຜ່ານ ໄດ້ມີການເຊີນຊວນກັນ ແບບ ພໍແຕ່ທັນເອີ້ນໃຜ ກໍເອີ້ນ, ໃຜມາໄດ້ກໍມາ ທີ່ບ້ານແຊັມປາຍ ພອນແກ້ວ, ໄດ້ມີ ການສະແດງຄວາມມີ Undou-shinkei ຂຶ້ນ ດ້ວຍການ ຕີດອກປີກໄກ່. ເຫັນໄດ້ວ່າ ບໍ່ທຳມະດາ, ບາງຄົນໄດ້ ປັດຝຸ່ນໄມ້ຕີດອກເທື່ອໃໝ່ ເພາະວ່າ ບໍ່ໄດ້ຕີມາດົນແລ້ວ ວ່າຊັ້ນເດ. ດຣ ສົມພອນ (ດຣ ໝໍແຂ້ວ ທີ່ຈົບຈາກ ມະ ຫາວິທະຍາໄລທັນຕະແພດ ໂຕກຽວ), ເບິ່ງເພິ່ນຕີບບາດ ໃດ ສອງຄົນຮັບກໍບໍ່ທັນ. ເພິ່ນຜູ້ນີ້ ມາພ້ອມດຽວກັນ ກັບ ອ້າຍວຽງເພັດ, ຄືຈະແມ່ນເປັນຂາຄູ່ກັນ ເພາະໄມ້ມວຍ ປີກໄກ່ສອງຄົນນີ້ ບໍ່ທຳມະດາ ລີລາແບບນັກແບັດອາຊີບ ພຸ້ນລະ. ຫຼັງຈາກນັ້ນ ກໍມີໂກຣາຍ(ຣຸ່ນນ້ອງ) ຄົນອື່ນໆ ທະຍ່ອຍກັນເຂົ້າມາ, ບັນຍາກາດການຕີດອກ ກໍຄຶກຄື້ນ ຂຶ້ນ, ມີສຽງຈໍແຈ ສະໜັ່ນຫູໄປຕາມເລື້ອງ... ເພາະວ່າ ຂ້າງນອກມີການດວນ ເບຍກັນໄປນຳ. ນັກກິລາບາງຄົນ ຕີເສຍ ຍ້ອນສາເຫດທີ່ວ່າ ກິ່ນປີ້ງເອັນ ມາລົບກວນດັງ ວ່າຊັ້ນ, ກະເລີຍເຮັດໃຫ້ຕີອອກ ຕີບໍ່ຂ້າມຕາໜ່າງເປັນ ປະຈຳ. ວັນນັ້ນ ມີນັກກິລາເຂົ້າຮ່ວມ 8 - 9 ຄົນເທົ່ານັ້ນ ແຕ່ມາເບິ່ງແລ້ວ, ມາເບິ່ງແລ້ວ ພາຍໃນອາດີດນັກສຶກ ສາພວກເຮົາ ອາດຈະມີຜູ້ມີສີມື ພໍທ້າແຂ່ງກັບພາກ ສ່ວນອື່ນໄດ້ ຢ່າງຂີ້ລ້າຍ ກະຊິປະມານ 3ຄູ່ນີ້ລະ. ສ່ວນ ວ່າປະເພດດ່ຽວນັ້ນ ຄາດວ່າໂອກາດໜ້າອັນໄກ້ໆນີ້ ຈະ ມີຈັດການແຂ່ງຂັນເປັນຢ່າງດີ ພຸ້ນໃດ.

ເມື່ອມີຄວາມເຫີກເຫີມ ເກີດຂຶ້ນແດ່ແລ້ວ, ເຖົ້າແກ້ ສີທັດຖະ ກະເລີຍ ສະເໜີ ຈະອອກເງິນສ່ວນນຶ່ງ ເພື່ອ ສ້າງບັນຍາກາດກິລາພາຍໃນ **ສອລຍ** ຂຶ້ນອີກວ່າຊັ້ນ.

**(ບານເຕະ ຢູ່ໜ້າ 11 ເດີ້ !!!)**

ຖ້າວ່າ ບໍ່ມີບັນຫາ, ເສື້ອກິລາບານເຕະ ຫຼືກິລາອື່ນ ກໍຈະອອກມາສູ່ສາຍຕາ ອ້າຍນ້ອງພວກເຮົາ. ແຕ່ເຖິງຢ່າງໃດກໍດີ, ເພາະວ່າພວກເຮົາທາງສະມາຄົມ ກໍບໍ່ມີງົບປະມານ, ຄາດວ່າ ຈະໃຫ້ສະມາຊິກຊື້ເອົາໃນ ລາຄາສິ່ງ ແລ້ວເປັນຂອງໃຜ ຂອງມັນໄປເລີຍວ່າຊັ້ນ, ຕາມສະພາເຮຣາເວົ້າ. ແຕ່ວ່າມັນຈະເກີດດອກອອກຜົນຮອດໃສນໍ ! ແຕ່ພວກເຮົາໃນນາມຄະນະປະສານກໍຈະພະຍາຍາມ ໃຫ້ມັນເປັນຮູບເປັນຮ່າງຂຶ້ນມາ.

ຄັນຊັ້ນ ! ຂໍປະກາດເລີຍສາເນາະ, ຜູ້ໃດທີ່ຮູ້ສຶກວ່າຕົວເອງມີຄວາມສາມາດດ້ານກິລາ ກໍຢ່າລືມຕິດຕໍ່ຫາພວກເຮົາແດ່,,,ເພາະພວກເຮົາຢາກໄດ້ນັກກິລາ ແລະຂາໂຫ່ ໂຕສັງກາດ. ແນ່ນອນ ໃຜກໍໄດ້ ກິລາບໍ່ເກັ່ງກະຢ່າ...ແຕ່ໃຈເກັ່ງເປັນພໍ. ຄະນະປະສານງານພວກເຮົາກໍາລັງຈະແນ ເປົ້າໄປແຂ່ງກັບ ຫ້ອງການໄຈກ້າ ຫຼື ສະຖານທູດ ເປັນເກມ ເປີດສະໂມສອນ,,, ຮ່າງໆ ກໍາລັງເວົ້າສໍາຫາວຂຶ້ນແລ້ວ...ຂໍໂທດເດີ້, ແຕ່ວ່າ ຢ່າລືມ !!! **Sanka Shite Ne,,,!**

# ຊີວິດນັກແປ ນ້ອຍ

ຫົວຂໍ້ເວົ້າວ່າ ນັກແປ ຢ່າສູ່ໝາຍຄວາມວ່າ ຄືຊິບໍ່ແມ່ນນັກກິນກໍແລ້ວກັນ. ຄໍາວ່ານັກແປນ້ອຍ ກໍຢ່າວ່າ ເພິ່ນເປັນບໍ່ໃຫຍ່ເດີ້...ຄວາມຈິງຕ້ອງຟັງລາຍລະອຽດກ່ອນ. ຊື່ ແທ້ ຊື່ວ່າ ຂວັນທອງ ນາມສະກຸນພູມມະເທບ, ຊື່ຫຼິ້ນ ພວກເຮົາເຈົ້າຂ້ອຍເອີ້ນກັນວ່າ ບຸນໂຍດ ຊັ້ນເດ໋. ພວກເຮົາໄດ້ຊັກຖາມຜູ້ກ່ຽວເປັນການສ່ວນຕົວ ກ່ຽວກັບການເຮັດວຽກຂອງລາວໃນນັ້ນ ໄດ້ຂໍ້ຄວາມພໍສະຫຼຸບໄດ້ວ່າ.

ບຸນໂຍດ ກໍແມ່ນນຶ່ງໃນບັນດານັກຮຽນມີຄຸນສົມບັດດີ, ໄດ້ຄະແນນດີຢູ່ກຸ່ມນັກຮຽນເກັ່ງ ຂອງຮຽນອຸດົມວຽງຈັນໃນເວລານັ້ນ. ຜູ້ກ່ຽວໄດ້ຖືກໄປຮຽນ ຕໍ່ທີ່ຍີປຸ່ນ ໃນປີ 1992, ໃນນາມນັກຮຽນວິຊາຊີບ, ຮຽນທີ່ໂຮງຮຽນກຽມພາສາຍີປຸ່ນ6ເດືອນ ຫຼັງຈາກນັ້ນກໍລຸຍວິຊາສະເພາະເລີຍ. ວິຊາສະເພາະທີ່ແທ້ຈິງ ຂອງຜູ່ກ່ຽວແມ່ນ ໄຟຟ້າ.



ຫຼັງຈາກຮຽນຫຼັກສູດ ວິຊາຊີບ 2ປີ, ຈົບແລ້ວ ກໍກັບມາລາວເລີຍ. ຜູ້ກ່ຽວວ່າ ມາຮອດແລ້ວ ບໍ່ຈັກວ່າຈະເຮັດວຽກໃດ, ໄປສະໝັກໃສກໍຍາກ ເພາະວ່າວິຊາສະເພາະທີ່ຮຽນມາຂ້ອນຂ້າງຈະກະເທີນແດ, ພໍດີໄລຍະນັ້ນ ປີ1996, ການທ່ອງທ່ຽວລາວກໍພໍດີເລີ່ມຄຶກຄື້ນຂຶ້ນມາ ກໍເລີຍສະໝັກເຮັດວຽກ ຮັບຈ້າງຮັບເສ ຂາຍນໍ້າລາຍ ດ້ວຍການແປພາສາກິນ, ເຂົ້າບໍລິສັດທ່ອງທ່ຽວນັ້ນ ອອກບໍລິສັດທ່ອງທ່ຽວນີ້ ໄປເລື້ອຍໆ ບໍ່ເລືອກບໍລິສັດເລີຍ ຂໍແຕ່ມີວຽກໃຫ້ແປ ແມ່ນລຸຍໂລດລະ.

ເມື່ອຖາມເຖິງວ່າ ໂຕ ກໍມັກວຽກນີ້ຢູ່ ບໍ່, ຜູ້ກ່ຽວກໍ່ຕອບວ່າ......ອ້າຍເອີ້ຍ ! ມັນກໍບໍ່ມັກປານໃດດອກ, ຈະເຮັດແນວໄດ້ຂອງວ່າເຮົາມີຄວາມຮູ້ກະເທີນຄືແນວນີ້ ໄປສະມັກວຽກ ບ່ອນໃດ ເພິ່ນກໍຖາມວ່າ ຈົບຊັ້ນໃດມາ ນ້ອງກະເລີຍອາຍທີ່ຈະຕອບ, ສູ່ມື້ນີ້ ພັດຈະຕ້ອງມີປະສົບການມາກ່ອນອີກດ້ວຍ. ແຕ່ວ່າ ຜູ້ກ່ຽວພັດກັບຕອບໄປໃນທາງສ້າງສັນອີກວ່າ, ເຮັດວຽກນີ້ກະດີຢູ່ດອກ ເຖິງວ່າຈະໄດ້ແລ່ນນໍາກົ້ນແຂກ ຕະລ່ອຍຕະລ່ອຍ ບາງເທື່ອກໍຕ້ອງໄດ້ເບິ່ງແຂກກິນເຂົ້າຢູ່ ແຕ່ວ່າ ກໍໄດ້ບົດຮຽນຫຼາຍອັນ, ໄດ້ໄປຫຼາຍເຂດແຂວງ ທ້ອງຖິ່ນເມືອງລາວ ນໍາການທ່ອງທ່ຽວແປພາສາ, ໄດ້ໄປເຫັນສະພາບການຜະລິດແຕ່ລະທ້ອງຖິ່ນມີອັນດີອັນຫຍໍ້ທໍ້ຄືແນວໃດ, ໄດ້ໄປເຫັນສະພາບດິນຟ້າອາກາດ ສະພາບແວດລ້ອມອື່ນໆ...ແຕ່ທີ່ສໍາຄັນການເຮັດວຽກນີ້ ຈະໄດ້ພົບກັບຜູ້ຄົນ ນາໆຈິດຕັງ ນາໆລະດັບອີກດ້ວຍ ບົດຮຽນທີ່ໄດ້ມາຈາກຄວາມຕັ້ງໃຈແລະບໍ່ຕັ້ງໃຈທັງໝົດນັ້ນລ້ວນແຕ່ນໍາເຂົ້າມາໄວ້ໃນມັນສະໝອງແລ້ວ. ຜູ້ກ່ຽວເວົ້າດ້ວຍຄວາມພູມໃຈວາດໃດວາດນຶ່ງ, ແຕ່ຜູ້ກ່ຽວກໍທັນໃຈໃຫຍ່ອອກມາ, ມີບົດຮຽນ ເຫັນບົດຮຽນຄືແນວນັ້ນຢູ່ ຄັນບໍ່ມີໂອກາດໄດ້ນໍາມາປະຕິບັດ ກໍບໍ່ມີຜົນຫຍັງເລີຍ (ຕໍ່ໜ້າ 6)

ຜູ້ຂ່າວກໍເລີຍຖາມໄປຕື່ມວ່າ ຄັນຊັ້ນໂຕຈະເຮັດຈັ່ງໃດເພື່ອຈະສາມາດນຳໃຊ້ບົດຮຽນທີ່ໄດ້ຮູ້ໄດ້ເຫັນ ໄດ້ເຂົ້າໃຈມາຄື ແນວນັ້ນ. ໝໍກໍເລີຍຕອບວ່າ, ກະນັ້ນລະ ທີ່ນ້ອງກຳລັງເຮັດວຽກເປັນ ຜູ້ນຳທ່ຽວຢູ່ນີ້ ກໍເພາະວ່າຢາກທ້ອນເງິນໄວ້, ແລ້ວຈັກວັນນຶ່ງໃນອານາຄົດໄກ້ໆນີ້ ນ້ອງຈະໃຊ້ຊີວິດໃໝ່ ທຸ່ມເທຈິດໃຈໄປໃສ່ດ້ານການຜະລິດ ການພັດທະນາຊົນ ນະບົດ ເຖິງວ່າວຽກນັ້ນຈະບໍ່ເປັນລາຍໄດ້ເປັນມື້ໆໄປ ຄືກັບການເປັນ ຜູ້ນຳທ່ຽວຄືສູ່ມື້ນີ້, ແຕ່ກໍເປັນວຽກທີ່ທ້າທາຍ ຄວາມສາມາດ, ຄວາມອົດທົນ... ໂອ້ໂຫ ! ຟັງໄປແລ້ວ ຜູ້ຂ່າວຈົນເຖິງກັບວ່າຊຶ້ງໄປເລີຍ ກໍນັບວ່າເປັນບົດຮຽນ ອັນດີ ໃຫ້ແກ່ສະມາຊິກທົ່ວໄປຂອງພວກເຮົາ. ບໍ່ແມ່ນ ເລື່ອງທຳມະດາ, ເຖິງຈະເປັນຜູ້ແປພາສາ ນຳການທ່ອງທ່ຽວ ແຕ່ຈິດໃຈກໍສູງສົ່ງ Yaru-Ki ga Aru no desune... ! ຜູ່ຂ່າວ ກະເລີຍຖາມໄປຕໍ່ວ່າ ຄັນຊັ້ນ ໂຕຈະເຮັດຫຍັງ ພາຍ ຫຼັງທີເຊົາການເປັນຜູ່ນຳທ່ຽວ,,, ໂອ້ຍ ຖາມງ່າຍແທ້ນໍ ແຕ່ວ່າຕອບນັ້ນຕີ ມັນຍາກ...ເອົາເປັນອັນວ່ານ້ອງບໍ່ສາມາດ ຕອບໄດ້ເທື່ອ ເພາະວ່າມັນຂ້ອນຂ້າງຈະເປັນຄວາມຫວັງທີ່ສູງ, ເມື່ອເປັນແນວນັ້ນ ຖ້າວ່າ ມັນບໍ່ສຳເລັດ ຫຼືວ່າ ບໍ່ໄດ້ ເຮັດ ຈະຫາວ່ານ້ອງຂີ້ໂມ້... ເອົາລະ ເອົາລະ ຖືວ່າ <u>**ໄລຍະທາງພິສູດມ້າ ເວລາພິສູດຄົນ**</u> ກະແລ້ວກັນສາເນາະ ! ...ຜູ້ກ່ຽວເວົ້າ. ເວົ້າຮອດບ່ອນນີ້ແລ້ວ ກໍໄດ້ຍິນສຽງໂທລະສັບມາ, ຜູ້ກ່ຽວຮັບໂທລະສັບຢູ່ຈັກໜ້ອຍແລ້ວ ກໍມະລຶບປົບ ປັບ ໄປກ່ອນເດີ້ ອ້າຍພອນແກ້ວ ແລ້ວພວກເຮົາຈຶ່ງລົມກັນໃໝ່ ເນາະ,,,ບໍ່ທັນໄດ້ເວົ້າຫຍັງ ຂ້າພະເຈົ້າກະພໍດີກຳລັງ ຈະເຂົ້າຫ້ອງນ້ຳ...ຕັ້ງແຕ່ນັ້ນມາຍັງບໍ່ທັນມີໂອກາດໄດ້ເວົ້າເລື່ອງນີ້ຄືນໃໝ່ເລີຍ.

ບໍ່ແມ່ນທຳມະດາ ບໍ່ແມ່ນນັກແປນ້ອຍໆ ໃຫຍ່ເຕີບເດີ້,,,ຢ່າງ ຂີ້ລ້າຍ ກໍມີເມຍນຶ່ງ ລູກນຶ່ງ ແລ້ວພຸ້ນລະ.

**ຂະໜາດວ່າ ຍ່າງກາຍແມ່ມານຊື່ໆ ທັນໃດວ່າ ແມ່ມານໄດ້ລູກແລ້ວ ເດ !**



**Erai ! ຫຼື Eroi !**

## ຄຶດວ່າ ຖືກ ຍ້ອງ !

ຕາມທຳມະດາ, Erai ແປວ່າ ເກັ່ງ, ດີເດັ່ນ, ຍິ່ງໃຫຍ່ ລ້ວນແຕ່ມີຄວາມໝາຍໄປໃນທາງບວກທັງນັ້ນ. ວັນນຶ່ງ ຂ້າພະເຈົ້າໄດ້ໄປເຄື່ອນໄຫວກິດຈະກຳ ແລກປ່ຽນວັດ ທະນະທຳກັບຊາວບ້ານ ໃນເຂດທີ່ໃກ້ກັບຫໍພັກຂອງຕົນ ເອງ . ໃນງານ ກໍມີການຫຼິ້ນກິລາ, ການເຮັດອາຫານ ກັນ ຢ່າງມ່ວນຊື່ນ. ສ່ວນຂ້າພະເຈົ້າ ຖະນັດໄປທາງກິ ລາ ກໍເລີຍຫຼິ້ນກິລາ ກັບເດັກນ້ອຍ, ເມື່ອຫຼິ້ນໄປ ຮູ້ສຶກ ຮ້ອນ ກໍເລີຍແກ້ເສື້ອອອກ ແລ່ນຫຼິ້ນກັບເດັກນ້ອຍ, ເດັກນ້ອຍຍີປຸ່ນ ພາກັນ ໂຮ່ ຮ້ອງ ໃສ່ຂ້າພະເຈົ້າວ່າ

**Eroi ! Eroi! O-nii-san !!!**
**Eroi ! Eroi! O-nii-san !!!**

ຂ້າພະເຈົ້າດີໃຈ, ມີກຳລັງໃຈຂຶ້ນມາ ເພາະຄຶດວ່າ ຖືກຍ້ອງ. ເອົາແທ້ ເອົາວ່າ ... ຈົນການຫຼິ້ນໝົດລົງ ເດັກ ນ້ອຍບາງຄົນ ກະຍັງມາເວົ້າໃຫ້ຄືເກົ່າ, ຂ້າພະເຈົ້າ ຍິ່ງມີ ຄວາມພາກພູມໃຈ, ຄືຈະແມ່ນເດັກນ້ອຍບໍ່ເຄີຍເຫັນຄົນທີ ຫຼິ້ນກິລາເກັ່ງຄືຂ້າພະເຈົ້າ ຕີ້ເບາະ ! ຂ້າພະເຈົ້າ ຄຶດ.

ແຕ່ຄວາມຈິງ, ເມື່ອຂ້າພະເຈົ້າກັບມາໂຮງຮຽນໃນມື້ ຕໍ່ມາ ກໍເລີຍ ເວົ້າສູ່ອາຈານ ດ້ວຍຄວາມເອກອ້າງ ຕໍ່ ອາ ຈານວ່າ ຂ້າພະເຈົ້າຖືກຍ້ອງ, ອາຈານພັດ ເປັນ ອາຈານ ຜູ້ຍິງຊ້ຳ, ອາຈານໄດ້ຍິນແລ້ວ ກໍຟ້າວດຶງຂ້າພະເຈົ້າອອກ ໄປນອກຫ້ອງຮຽນ ເພາະຢ້ານຂ້າພະເຈົ້າຈະອາຍໝູ່ຄົນ ອື່ນ, ຄວາມຈິງ **Eroi** ກັບ **Erai** ມັນຄົນລະຢ່າງ, **Eroi** ແປວ່າ ລາມົກ, ໂປ້, ລ້ອນຈ້ອນ.. ຕ່າງຫາກເດີ້,

ຂ້າພະເຈົ້າ ຕົກຂະມ່າ ບໍ່ມີອັນແກ້ຕົວ ກະຫັ້ນລະ !

ຂ້ອຍ... **Eroi !**

# ສະມາຄົມ ອາດີດນັກສຶກສາ ຂອງບັນດາປະເທດ ອາຊຽນ ການເຄື່ອນໄຫວ ໃນຂອບ ASEAN+3

ຖ້າສັງເກດຈາກບັນດາປະເທດໃນຂົງເຂດອາຊີດ້ວຍກັນ, ນັກສຶກສາຂອງບາງປະເທດເຊັ່ນ ຟີລິບປິນ ໄທ ແລະ ສິງກະໂປ ຊຸດຕົ້ນໆ ໄດ້ຖືກສົ່ງໄປຮຽນທີ່ປະເທດຍີ່ປຸ່ນ ໃນລະຫວ່າງທົດສະຫວັດຕົ້ນໆ ຂອງສັດຕະຫວັດທີ່20. ມາເຖິງປະຈຸບັນ ນັກສຶກສາທີ່ຮຽນຈົບຈາກປະເທດຍີ່ປຸ່ນຂອງແຕ່ລະປະເທດເຫຼົ່ານີ້ ມີຈຳນວນນັບທັວໝື່ນຂຶ້ນໄປ. ສະເພາະການເຄື່ອນໄຫວໃນຮູບແບບສະມາຄົມຂອງນັກສຶກສາເກົ່າທີ່ຈົບຈາກປະເທດຍີ່ປຸ່ນຂອງປະເທດໄທນັ້ນ ມັນໄດ້ເລີ່ມມາແລ້ວ ເປັນເວລາ 51ປີ, ໃນນັ້ນສະມາຊິກປະຈຳຂອງສະມາຄົມໃນປະຈຸບັນ ໄດ້ກວມເອົາຈຳນວນ ຫຼາຍກ່ວາ 2 ພັນຄົນ ອັນໄດ້ເຮັດໃຫ້ການເຄື່ອນໄຫວໃນຮູບສະມາຄົມຂອງພວກເຂົາເຈົ້າມີຫຼັກສະນະຄົບຖ້ວນ ແລະ ແຂງແຮງ.

ຈາກບັນຫາພາກພື້ນ, ປະເທດຂອງພວກເຮົາກໍ່ແມ່ນປະເທດນຶ່ງ ໃນ 10ປະເທດອາຊຽນ ແລະ ແນວ ໂນ້ມກໍ່ຈະກ້າວໄປເປັນອາຊຽນ 10+3 ດັ່ງນັ້ນ ດ້ານນຶ່ງມັນໄດ້ຮຽກຮ້ອງ ແລະເລັ່ງທວງເຮັດໃຫ້ພວກເຮົາຈະໄດ້ຕ້ອງໄດ້ເຂົ້າຮ່ວມຂະບວນການສາກົນ ຫຼື ພາກພື້ນ ຢ່າງຄົບຖ້ວນແລະ ສະເໝີຕົ້ນສະເໝີປາຍ ໃນເວທີດັ່ງກ່າວ.

ສະເພາະຮູບແບບການເຄື່ອນໄຫວໃນລັກສະນະໜ່ວຍຮ່ວມໝູ່ ຫຼື ສະມາຄົມນັ້ນ, ສະມາຄົມນັກ ນັກສຶກສາເກົ່າທີ່ຮຽນຈົບຈາກປະເທດຍີ່ປຸ່ນຂອງບັນດາປະເທດອາຊຽນແມ່ນລ້ວນແຕ່ມີການເຄື່ອນໄຫວຮ່ວມກັນ ໃນລະດັບຂົງເຂດອາຊີອາຄະເນນີ້ ມານານແລ້ວ, ແນນອນຢູ່ ໃນນັ້ນ ສິ່ງທີ່ຂາດບໍ່ໄດ້ ນັ້ນແມ່ນການອຸປະຖຳຈາກປະເທດຍີ່ປຸ່ນນັ້ນເອງ

ໃນແຕ່ລະປີ ການປະຊຸມ ພົບປະ ແລກປ່ຽນຄຳຄິດຄຳເຫັນຂອງນັກສຶກສາ ດັ່ງກ່າວ ແມ່ນຖືກຈັດຂຶ້ນທຸກໆປີ ທີ່ປະເທດຍີ່ປຸ່ນ ໂດຍແມ່ນກະຊວງການຕ່າງປະເທດຍີ່ປຸ່ນເປັນເຈົ້າພາບ. ຝ່າຍຍີ່ປຸ່ນໄດ້ໃຫ້ຄວາມສຳຄວາມສຳຄັນຂອງການເຄື່ອນໄຫວດັ່ງກ່າວ, ໃນກອງປະຊຸມພົບປະ ຕົວແທນນັກສຶກສາແຕ່ລະປະເທດຈະໄດ້ກ່າວຄຳປາໃສທີ່ມີເນື້ອໃນກ່າວເຖິງສະພາບການຮ່ວມມືຂອງປະເທດຕົນກັບຍີ່ປຸ່ນ, ສະພາບຂອງນັກສຶກສາທີ່ພາຍຫຼັງຮຽນຈົບຈາກປະເທດຍີ່ປຸ່ນຕະຫຼອດເຖິງດ້ານວັດທະນະທຳ ແລະອື່ນໆ. ໃນແຕ່ລະປີ ຝ່າຍຍີ່ປຸ່ນທີ່ເປັນເຈົ້າພາບນັ້ນ ປົກກະຕິ ຈະມີບຸກຄົນໃນລະດັບລັດຖະມົນຕີ, ຮອງລັດຖະມົນຕີຂອງກະຊວງການຕ່າງປະເທດຍີ່ປຸ່ນ, ອະທິບໍດີຜູ້ທີ່ກ່ຽວຂ້ອງທາງດ້ານວຽກງານການສຶກສາ, ການຮ່ວມມືສາກົນ ແລະຜູ້ຕາງໜ້າໃນພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ໃນນັ້ນນັບຕັ້ງແຕ່ປີ 1999 ເປັນຕົ້ນມາ, ໂດຍຮ່ວມກັບກະຊວງການຕ່າງປະເທດລາວ ສະຖານທູດຍີ່ປຸ່ນປະຈຳລາວ ໄດ້ ສົ່ງຕົວແທນນັກສຶກສາລາວ ເຂົ້າຮ່ວມກອງປະຊຸມດັ່ງກ່າວ. ສະເພາະໃນປີນີ້ ເດືອນສິບທີ່ຜ່ານມາ ຕາງໜ້າອາດີດນັກສຶກສາຂອງລາວເຮົາ ຈຳນວນ 3ຄົນ ໂດຍມີ :

- ທ່ານ ຄຳມ່ວນ ຊິມສີທາປັນຍາ ຮອງຜູ້ອຳນວຍການບໍລິສັດ ໄທລະຄົມລາວ
- ທ່ານ ນາງ ຈັນສະໄໝ ບໍລິສັດTozai
- ທ່ານ ບຸນຖອງ ພະນັກງານ ພະແນກສຶກສາ ແຂວງວຽງຈັນ

ນອກຈາກກອງປະຊຸມດັ່ງກ່າວ, ໂດຍໄດ້ຮັບການສະໜັບສະໜູນອີກແຮງ ນຶ່ງ ຈາກ ທາງຝ່າຍ ກະຊວງການຕ່າງປະເທດຍີ່ປຸ່ນນັ້ນ, ທຸກໆ 2ປີຈະຈັດໃຫ້ມີກອງປະຊຸມພົບປະດັ່ງກ່າວຂຶ້ນ ໃນປະເທດໃດນຶ່ງຂອງ ກຸ່ມ ອາຊຽນເອງອີກ. ປີ 2001 ໄດ້ມີກອງປະຊຸມພົບປະ ທີ່ຖືກຈັດຂຶ້ນຢູ່ປະເທດຟີລິບປິນ, ຕາງໜ້າ ຝ່າຍລາວທີ່ເຂົ້າຮ່ວມ ມີ

- ທ່ານ ຄຳສິງ ໄຊຍະກອນ ໃນນາມ ອາດີດ ເອກອັກຄະລັດຖະທູດລາວ ປະຈຳປະເທດຍີ່ປຸ່ນ.
- ທ່ານ ສິງຄຳ ຮອງ ຫົວໜ້າກົມ ຈັດຕັ້ງມະຫາຊົນຂອງສູນກາງພັກ.
- ທ່ານ ບົວຄຳ ສີສຸລາດ ຫົວໜ້າພະແນກກະສິກຳ ແຂວງສະຫວັນນະເຂດ ໃນນາມ ນັກສຶກສາ



- ດຣ ພອນແກ້ວ ຈັນທະມາລີ ຫົວໜ້າພະແນກສົ່ງເສີມການຄົ້ນຄ້ວາວິທະຍາສາດ ມ.ຊ, ນັກສຶກສາເກົ່າ.
- ທ່ານ ສີທັດຖະ ລາດຊະພົນ ຜູ້ອຳນວຍການ ບໍລິສັດ ສີໄຊການຄ້າຈຳກັດ ໃນນາມ ນັກສຶກສາເກົ່າ.

(ໃນປີ 2003 ກອງປະຊຸມດັ່ງກ່າວນີ້ ສະມາຄົມນັກສຶກສາເກົ່າປະເທດມະເລເຊຍຈະເປັນເຈົ້າພາບ). ນອກຈາກນັ້ນ ໃນບາງຂະບວນການທີ່ສຳຄັນ, ນັກສຶກສາລາວກໍ່ໄດ້ຖືກເຊີນເຂົ້າຮ່ວມຢ່າງເປັນປະຈຳ ເຊັ່ນ ເດືອນ 1 ປີ2002 ຕົວແທນນັກສຶກສາລາວ 1ຄົນ ກໍໄດ້ຖືກເຊີນ ໃຫ້ເຂົ້າຮ່ວມພົບປະ ອາດີດນັກສຶກສາເກົ່າຂອງບັນດາປະເທດອາຊຽນ ກັບ ນາຍົກລັດຖະມົນຕີຍີປຸ່ນ ທ່ານ ໂຄອິຊຸມິ ທີ່ ບາງກອກ ປະເທດໄທ, ແລະບາງຂະບວນການ ທີ່ບໍ່ເປັນປະຈຳ ໃນຫຼັກສະນະ ພາກພື້ນຈຳນວນນຶ່ງອີກ.

ຜ່ານການເຄື່ອນໄຫວດັ່ງກ່າວ, ນັກສຶກສາລາວໄດ້ມີໂອກາດສະແດງທັດສະນະເປັນຕົວແທນໃຫ້ແກ່ປະເທດຂອງຕົນໄດ້ເປັນຢ່າງດີ, ໄດ້ສະແດງໃຫ້ເຫັນເຖິງຈຸດຢືນຂອງລາວເຮົາ ຕໍ່ຄວາມສຳຄັນຂອງການຮ່ວມມືກັບຍີປຸ່ນ ແລະ ກໍຄືກັບພາກພື້ນ ອາຊຽນ 10+3. ແຕ່ສິ່ງນຶ່ງທີ່ພວກເຮົາຍັງມີຄວາມແຕກຕ່າງໃນຂະບວນການດັ່ງກ່າວນີ້ ແມ່ນ ພວກເຮົາຍັງບໍ່ທັນໄດ້ມີ ອົງກອນຂອງນັກສຶກສາທີ່ສາມາດເຄື່ອນໄຫວໃນຮູບຂອງ ສະມາຊິກຮ່ວມໝູ່ ຫຼືສະມາຄົມນັ້ນ ໄດ້ຢ່າງເປັນປົກກະຕິ. ຈາກສະພາບຕົວຈິງດັ່ງກ່າວນີ້, ກໍບໍ່ແຕກຕ່າງຫຍັງກັບບາງຂະບວນການ ທີ່ລາວເຮົາຍັງບໍ່ທັນໄດ້ມີ ແຕ່ ບໍ່ວ່າຈະເປັນເຫດຜົນທາງພາຍໃນ ກໍ່ຄືທາງທ່າອ່ຽງລວມຂອງພາກພື້ນ ພວກເຮົາຈຳເປັນຈະຕ້ອງມີອົງກອນອັນເໝາະສົມນຶ່ງເພື່ອເຂົ້າຮ່ວມຢ່າງຕັ້ງໜ້າ.

# ປະກາດ ປະກາດ
## ຕ້ອງການ ຜູ້ມີຝີມື

ອ.ຈ ພອນແກ້ວ ໄດ້ອອກແບບ ກາໝາຍຂອງສະມາຄົມມາແລ້ວ ເພື່ອຊ່ຳຊາໄປກ່ອນ, ກາໝາຍນັ້ນແມ່ນໄດ້ເອົາດອກໄມ້ປະຈຳຊາດຂອງທັງລາວ"ດອກຈຳປາ" ແລະຍີປຸ່ນ"ດອກຊະກຸຣະ" ປະກົບປະສານກັນ ຄືຈັ່ງວ່າແມ່ນດອກໄມ້ອັນດຽວກັນ ອັນໝາຍເຖິງການປະສານຮ່ວມມື ຂອງລາວ ແລະຍີປຸ່ນ, ຮູບສ່ວນພື້ນແມ່ນຮູບໜ່ວຍໂລກ ອັນໝາຍເຖິງ ຄວາມເປັນສ່ວນນຶ່ງຂອງສາກົນ ຫຼືຄວາມມີລັກສະນະສາກົນ ວ່າຊັ້ນ.

ເຖິງຢ່າງໃດກໍດີ ກາໝາຍທີ່ອອກແບບໄປກ່ອນນັ້ນ ບໍ່ອາດເປັນສິ່ງທີ່ເໝາະສົມທີ່ສຸດໄດ້, ຈຶ່ງຢາກຈະຕ້ອງ ມີການປະກອບສ່ວນຂອງ ອ້າຍນ້ອງຄົນອື່ນ ທີ່ມີຄວາມສາມາດຕື່ມອີກ.

ກາໝາຍ ທີ່ຕ້ອງການ ຈະຕ້ອງມີ ລັກສະນະພື້ນຖານ ດັ່ງນີ້ :

- ລັກສະນະຊາດ
- ລັກສະນະ ສະແດງເຖິງການຮ່ວມມື 2ຊາດ
- ລັກສະນະສາກົນ
- ກະທັດຫັດ, ມີຄວາມໝາຍກວມລວມ
- ບໍ່ເກີນ 3ສີ

ດັ່ງນັ້ນ ຈຶ່ງປະກາດມາຍັງອ້າຍນ້ອງ ນັກສຶກສາລາວ ຜູ້ຊຶ່ງໄດ້ຈົບການສຶກສາຈາກປະເທດຍີປຸ່ນ ແລະມີຄວາມສົນໃຈ ຈົ່ງໄດ້ໃຫ້ຄວາມຮ່ວມມື ໃນຈຸດປະສົງດັ່ງກ່າວດ້ວຍ.

# ຄວາມເປັນມາຂອງ ສະມາຄົມ

# ອາດີດນັກສຶກສາລາວ

ເຫດຜົນທີ່ພາໃຫ້ເກີດມີສະມາຄົມນັກສຶກສາລາວ ຄວາມຈິງ ແມ່ນມາມາຈາກປັດໃຈ ພາຍໃນ ແລະ ພາຍນອກດັ່ງນີ້ :

ສາເຫດ ພາຍໃນ :

- ເມື່ອຈຳນວນ ນັກສຶກສາລາວທີ່ໄດ້ສຳເລັດການສຶກສາ ຈາກປະເທດຍີ່ປຸ່ນໄດ້ມີຈຳນວນເພີ່ມຂຶ້ນເລື້ອຍໆ, ນັກສຶກ ສາລາວຈຶ່ງຢາກມີ ການແລກປ່ຽນ ຢາກມີການພົບປະ ປຶກສາ ໂດຍຜ່ານຮູບການ ການຈັດຕັ້ງ ຂອງສະມາຄົມ.
- ການເປັນສະມາຄົມ ຈະສາມາດເປັນການເຕົ້າໂຮມ ເອົາຄວາມສາມັກຄີ ພາຍໃນນັກຮຽນ, ຈະເປັນຖານໃນການຂຸດຄົ້ນເອົາຄວາມສາມາດບົ່ມຊ້ອນຂອງນັກຮຽນ ບັດຮຽນຕ່າງໆຂອງພວກເຂົາເຈົ້າທີ່ໄດ້ຮຽນມາຈາກປະເທດຍີ່ປຸ່ນ ດັດສົມໃຫ້ເປັນຜົນປະໂຫຍດ ເຂົ້າໃນວຽກງານການພັດທະນາເສດຖະກິດສັງຄົມລາວ ຢ່າງມີປະສິດຕິຜົນຂຶ້ນຕື່ມ.
- ການເປັນສະມາຄົມ ຈະສາມາດເປັນການສ້າງຂົວຕໍ່ອີກ ອັນນຶ່ງ ໃຫ້ແກ່ບັນດາວຽກງານ ການຮ່ວມມືລະຫວ່າງ ລາວ ຍີ່ປຸ່ນ ໃນລະດັບ ທັງພາກລັດ ແລະບໍ່ແມ່ນລັດໃຫ້ໄດ້ດີຂຶ້ນ.

ສາເຫດ ພາຍນອກ :

- ບັນຍາກາດ ການຮ່ວມມືສາກົນໄດ້ຜັນແປເຮັດໃຫ້ເກີດມີບັນດາພາກພື້ນ ເຂດເສດຖະກິດ ອື່ນໆຂຶ້ນ. ASEAN ກໍໄດ້ເປັນພາກພື້ນນຶ່ງທີ່ມີຄວາມສຳຄັນໃນການຮ່ວມມືສາກົນ ແລະກໍ ມີທ່າອ່ຽງກ້າວໄປສູ່ການຮ່ວມມື ທີ່ຮອບດ້ານຍິ່ງຂຶ້ນ. ນັບແຕ່ປີ 2002 ເປັນຕົ້ນມາ ກະແສຮ່ວມມື ASEAN + 3 ກໍມີອັນພົ້ນ – ເດັ່ນຂຶ້ນ. ການການເຄື່ອນໄຫວ ຮ່ວມມືໃນລະດັບ ນັກສຶກສາ ASEAN ໂດຍສະເພາະແມ່ນກຸ່ມອາດີດນັກສຶກສາທີ່ຈົບມາຈາກປະເທດຍີ່ປຸ່ນ ກໍມີການເໜັງຕີງໄປເຊັ່ນກັນ.
- ລັດຖະບານລາວ ເຫັນຄວາມສຳຄັນ ການຮ່ວມມືລະຫວ່າງລາວ ແລະຍີ່ປຸ່ນແມ່ນມີບໍລິມາດເພີ່ມຂຶ້ນທັງປະລິມານ ແລະຄຸນນະພາບ ທີ່ມີຜົນກະທົບອັນດີເຂົ້າໃນວຽກງານພັດທະນາເສດຖະກິດສັງຄົມລາວ. ດັ່ງນັ້ນ, ບັນຍາກາດ ການຮ່ວມມື ຈຶ່ງຈະຕ້ອງ ມີຫຼາຍຮູບຫຼາຍສີສັນຍິ່ງຂຶ້ນ.
- ລັດຖະບານ ກໍຄືສະຖານທູດຍີ່ປຸ່ນກໍໄດ້ເຫັນສຳຄັນ ຂອງການສືບຕໍ່ ກໍ່ສ້າງບັນດານັກສຶກສາລາວ ໃຫ້ກາຍ ເປັນຜົນປະໂຫຍດອັນສູງ ເປັນຂົວຕໍ່ອີກອັນນຶ່ງ ໃຫ້ແກ່ ການພົວພັນມິດຕະພາບ ລະຫວ່າງ ລາວ-ຍີ່ປຸ່ນ.

ເຫດຜົນທີ່ກ່າວມາຂ້າງເທິງນີ້ໄດ້ເປັນສາເຫດພື້ນຖານທີ່ນຳມາສູ່ການສ້າງເປັນສະມາຄົມອາດີດ ນັກ ສຶກສາລາວຈາກປະເທດຍີ່ປຸ່ນ.

ການດຳເນີນ ເພື່ອກໍ່ສ້າງສະມາຄົມ ແນ່ນອນ ແມ່ນໄດ້ ຜ່ານຂັ້ນຕອນຕາມລະບຽບການ, ມີການຈັດປະຊຸມນັກສຶກສາໃນຫຼາຍລະດັບ ຫຼາຍລົບຫຼາຍຕ່າວ ແລະໄດ້ຮັບການຊີ້ນຳຢ່າງໃກ້ຊິດ ຈາກກົມຈັດຕັ້ງມະຫາຊົນ ຄະນະພົວພັນຕ່າງປະເທດສູນກາງພັກ. ພາຍໃຕ້ຂໍ້ຕົກລົງຂອງສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ສະບັບລົງວັນທີ 11/05/2001 ລົງລາຍເຊັນແລະປະທັບຕາໂດຍ ທ່ານ ດຣ ປອນເມກ ດາລາລອຍ, ສະມາຄົມໄດ້ຖືກອະ ນຸມັດໃຫ້ມີການສ້າງຕັ້ງ ໃຫ້ເປັນໜ່ວຍຮ່ວມໝູ່ອາດີດ ນັກສຶກສາລາວຈາກຍີ່ປຸ່ນ ຊຶ່ງເປັນໜ່ວຍນຶ່ງຢູ່ໃນສມລຍ ແລະ ຢູ່ພາຍໃຕ້ການດູແລ ຂອງ ກົມຈັດຕັ້ງ ມະຫາຊົນ ຄະນະ ພົວພັນຕ່າງປະເທດສູນກາງພັກ. ຕໍ່ມາໃນລະຫວ່າງເດືອນກຸມພາ ປີ 2001 ໂດຍຢືມສະຖານທີ່ ພາກວິຊາ ເອເລັກໂຕຣນິກ ຄະນະວິສະວະກຳສາດ ກອງປະຊຸມຄັດເລືອກຄະນະສະມາຄົມນັກສຶກສາລາວ ຈຶ່ງໄດ້ຂຶ້ນ. ກອງປະຊຸມຄັ້ງນັ້ນ ບໍ່ໄດ້ມີການຮຽກເຊີນ ນັກສຶກສາລາວທີ່ຈົບດ້ວຍທຶນຂອງ JICE ແລະJICA ດ້ວຍສາເຫດທີ່ວ່າ ນັກສຶກສາ ທີ່ຈົບຈາກທຶນດັ່ງກ່າວຍັງມີຈຳນວນນ້ອຍ. ການເຕົ້າໂຮມ ເພື່ອປະຊຸມຊ້ອນຂ້າງຈະມີຄວາມຫຍຸ້ງຍາກ ເພາະການທີ່ນັກສຶກສາຢູ່ກະແຈກກະຈາຍ ແລະເຮັດວຽກຕາມຂົງເຂດວຽກງານຂອງໃຜມັນຈຶ່ງເຮັດໃຫ້ການຮຽກເຊີນບໍ່ທົ່ວເຖິງ, ດ້ານນຶ່ງກະໂຕນັກສຶກສາງ ບາງຄົນທີ່ກັບຈາກປະເທດຍີ່ປຸ່ນ ກໍບໍ່ຄ່ອຍສົນໃຈກິດຈະກຳຮວມໝູ່ ແລະການຈັດຕັ້ງກໍຍັງບໍ່ທັນມີ, ກອງປະຊຸມຄັ້ງນັ້ນ ຈຶ່ງມີພຽງ16ຄົນເຂົ້າຮ່ວມ. ຜູ້ອະວຸໂສກ່ວາໝູ່ ແມ່ນ ທ່ານ ລັງສີ ໄຊວິສິດ ຫົວໜ້າກົມ ຊົນ

ລະປະທານ ກະຊວງກະສິດກຳ. ທ່ານ ເປັນນັກສຶກສາເມື່ອຕົ້ນຊຸມປີ 60, ທ່ານ ສຸດໃຈ ພິລາທິວົງ ຮອງຫົວໜ້າກົມອາຊີ ປາຊີຟິກ ກະຊວງການຕ່າງປະເທດລາວ. ເນື່ອງຈາກວ່າ ຈຳນວນຜູ້ເຂົ້າຮ່ວມມີນ້ອຍ ຈາກຈຳຈວນ 16ຄົນໄດ້ ມີການປ່ອນບັດຄັດເລືອກ ເອົາ 6ຄົນເປັນຄະນະ ແລະເລືອກເອົາອີກຕື່ມ 2ຄົນເຮັດວຽກເລຂານຸການ. ໃນນັ້ນ ເພື່ອເປັນຄວາມສະເໝີພາບກັນ, ທັງ16ຄົນແມ່ນລ້ວນມີສິດໄດ້ຮັບການຄັດເລືອກທັງນັ້ນ. ຜົນການຄັດເລືອກໄດ້ປະກົດອອກຕາມລຳດັບດັ່ງນີ້ :

1. ດຣ ພອນແກ້ວ ຈັນທະມາລີ
2. ທ່ານ ລັງສີ ໄຊວິສິດ
3. ທ່ານ ສິທັດຖະ ລາຊພົນ
4. ທ່ານ ຄຳມ່ວນ ຊົມສີຫາປັນຍາ
5. ດຣ ເກດແກ້ວ ພວງເພັດ
6. ທ່ານ ເພັຍເພັດ ສາດາວເຮືອງ

ເລຂານຸການ ນ. ດວງມາລາ ກຸນຊະນະ
ນ. ບົວສອນ ວົງຖາວອນ

ຈາກຜົນປະຊຸມດັ່ງກ່າວ ກອງປະຊຸມໄດ້ຕົກລົງ ປະທານ ຄະນະປະທານຂຶ້ນ ໂດຍມີຜົນຕົກລົງດັ່ງນີ້ :

| | |
|---|---|
| ປະທານສະມາຄົມ | ທ່ານ ລັງສີ ໄຊວິສິດ |
| ຮອງ | ດຣ ພອນແກ້ວ ຈັນທະມາລີ |
| ຄະນະ | ຈັດຕາມຄະແນນ ທີ3 ເຖິງ 6 ຄືເກົ່າ. |

ຈາກນັ້ນ ຄະນະສະມາຄົມທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຈຶ່ງໄດ້ເຮັດລາຍງານ ແລະບົດສະເໜີ ເຖິງ ສມລຍ ເພື່ອຮັບຮອງເອົາ, ຄະນະດັ່ງກ່າວ. ອີງຕາມການຊີ້ນຳຂອງ ກົມຈັດຕັ້ງມະຫາຊົນ ແລະເງື່ອນໄຂຕົວຈິງໃນການ ປະກອບສ່ວນເຮັດວຽກໃນສະມາຄົມນັ້ນ ຄະນະຈຶ່ງໄດ້ມີການປັບປຸງ ບາງບຸກຄົນໃນຄະນະ ແລະ ໃນທີ່ສຸດ ພາຍໃຕ້ ຂໍ້ຕົກລົງຮັບຮອງ ເລກທີ 26/ ສມລຍ ລົງວັນທີ 30/ພຶດສະພາ/2003 ເຊັນປະທັບຕາ ໂດຍ ທ່ານ ດຣ ປອນເມກ ດາລາລອຍ ປະທານ ສມລຍ ຄະນະທີ່ມີລາຍຊື່ດັ່ງລຸ່ມນີ້ ຈຶ່ງໄດ້ ຖືກຮັບຮູ້ຢ່າງເປັນທາງການ. ຄະນະ **ສອລຍ** ຊຶ່ງປະກອບມີດັ່ງນີ້ :

| | |
|---|---|
| ປະທານ ສະມາຄົມ | ດຣ ພອນແກ້ວ ຈັນທະມາລີ |
| ຮອງ | ທ່ານ ສິທັດຖະ ລາຊພົນ |
| ຮອງ | ທ່ານ ຄຳມ່ວນ ຊົມສີຫາປັນຍາ |
| ຄະນະ | ທ່ານ ວັນທາ ແສງເມືອງ |
| ຄະນະ | ທ່ານ ພຸດທາ ເພັດໃບສີ |
| ຄະນະ | ທ່ານ ທອງວັນ ເທບໄກສອນ |
| ເລຂາ | ທ່ານ ນ. ດວງມາລາ ກຸນຊະນະ |
| | ທ່ານ ນ. ບົວສອນ ວົງຖາວອນ |
| **ທີ່ປຶກສາ ຄະນະສະມາຄົມ** | ທ່ານ ລັງສີ ໄຊວິສິດ |
| | ທ່ານ ດຣ ເກດແກ້ວ ພວງເພັດ |

ຈາກນັ້ນມາ, ຖືວ່າການເຄື່ອນໄຫວຂອງ ສະມາຄົມອາດີດນັກສຶກສາລາວ ຈາກຍີ່ປຸ່ນ ເປັນການເຄື່ອນໄຫວຢ່າງເປັນທາງການ ແລະຖືກຕ້ອງ

**ຈາກ ປະທານ ສະມາຄົມ ເຖິງ ອາດີດນັກສຶກສາ !**

ເຖິງບັນດາທ່ານ ອາດີດນັກສຶກສາ ທີ່ຮັກແພງໝົດທຸກຄົນ ! ຂ້າພະເຈົ້າໃນນາມປະທານສະມາຄົມ ແລະໃນນາມສ່ວນຕົວ ຂ້າພະເຈົ້າ ຢາກຂໍບອກວ່າ ທ່ານແມ່ນທຶນຮອນອັນປະເສີດອັນນຶ່ງຂອງສັງຄົມລາວ, ທ່ານໄດ້ມີໂອກາດໄປສຶກສາທີ່ປະເທດຍີ່ປຸ່ນ ຊຶ່ງຖືວ່າເປັນປະເທດທີ່ ກ້າວໜ້າທາງ ດ້ານເຕັກນິກອັນທັນສະໄໝ ຂອງໂລກ, ເປັນປະເທດທີ່ປະຊາຊົນມີຄວາມອຸດົມສົມບູນທາງດ້ານເສດຖະກິດ. ແນ່ນອນ ອັນດີ ອັນຫຍໍ້ທໍ້ຂອງສັງຄົມຍີ່ປຸ່ນ ບ່ອນທີ່ພວກທ່ານໄດ້ເຄີຍຮຽນຢູ່ນັ້ນ ກໍຍ່ອມມີຄູ່ກັນໄປ, ສຳຄັນແຕ່ວ່າ ພວກເຮົາຈະນຳໃຊ້ສ່ວນໃດໃຫ້ເປັນຜົນດີແກ່ການພັດທະນາເສດຖະກິດສັງຄົມລາວ. ຄວາມຮູ້ແລະປະສົບການທີ່ທ່ານໄດ້ປະສົບມາ ຖ້າຫາກໄດ້ມີໂອກາດນຳມາສົມທົບກັນ ມັນຄົງຈະເປັນສິ່ງນຶ່ງທີ່ສາມາດປະກອບສ່ວນແກ້ໄຂບັນຫາສັງຄົມຂອງພວກເຮົາໃຫ້ໄດ້ດີຂຶ້ນກ່ວາເກົ່າຢ່າງແນ່ນອນ. ການເປັນສະມາຄົມກໍແມ່ນຮູບການນຶ່ງທີ່ ເປັນຕົວແທນໃຫ້ພວກທ່ານໃນການເຕົ້າໂຮມ, ການແລກປ່ຽນ, ການຊ່ວຍເຫຼືອຊຶ່ງກັນແລະກັນ, ການເປັນກ້ອນກຳລັງແຮງ, ການເປັນຮູບຮ່າງການຈັດຕັ້ງນຶ່ງ ອັນທີ່ຈະເປັນການຊ່ວຍເຮັດໃຫ້ ບົດບາດ ແລະຂອງພວກ ທ່ານໄດ້ພົ້ນເດັ່ນເຂົ້າໃນການປະກອບສ່ວນໃນວຽກງານພັດທະນາ ເສດຖະກິດ ສັງຄົມຂອງຊາດແລະມີຜົນໃນທາງບກຕໍ່ໂຕທ່ານເອງ.

ບັນດານັກສຶກສາລາວ ທີ່ໄດ້ໄປສຶກສາແລະກັບຈາກປະເທດຍີ່ປຸ່ນ ປະຈຸບັນກໍມີຫຼາຍຂຶ້ນທັງຈຳນວນ ແລະທັງຮູບແບບທຶນການສຶກສາ. ໃນນັ້ນ ໄດ້ເລີ່ມຕົ້ນຈາກພວກທີ່ໄປດ້ວຍທຶນ "Monbusho(ກະຊວງສຶກສາຍີ່ປຸ່ນ)" ຕໍ່ມາກໍມີນັກສຶກສາທີ່ໄປດ້ວຍທຶນ JICA, JICE ອື່ນໆ.

ແຕ່ເນື່ອງຈາກວ່າ ໃນເບື້ອງຕົ້ນພວກເຮົາຍັງຂາດລະບົບເຮັດວຽກທີ່ເໝາະສົມ, ເງື່ອນໄຂກຕົວຈິງໃນການເຄື່ອນໄຫວການປະສານສົມທົບຍັງອ່ອນນ້ອຍ ດັ່ງນັ້ນ ຂ່າວສານຫຼາຍອັນກໍບໍ່ສາມາດໄປເຖິງອ້າຍນ້ອງອາດີດນັກສຶກສາໄດ້ທຸກຄົນ. ຂ້າພະເຈົ້າໃນນາມປະທານ ສະມາຄົມຈຶ່ງຢາກຂໍຮຽກເອີ້ນມາຍັງນິສິດນັກສຶກສາ ໝົດທຸກຄົນ ຈົ່ງໄດ້ທັນໜ້າເຂົ້າມາເພື່ອສາມັກຄີກັນ ເຮັດໃຫ້ສະມາຄົມຂອງພວກເຮົາເປັນຂົວຕໍ່ທີ່ແໜ້ນໜາອັນນຶ່ງ ປະກອບສ່ວນເຮັດໃຫ້ການພົວພັນ ລະຫວ່າງລາ-ຍີປຸ່ນ ແລະ ລາວ ກັບ ASEAN+3 ມີບາດກ້າວທີ່ໜັກແໜ້ນ ຫຼາຍສີສັນຂຶ້ນໄປກ່ວາເກົ່າ. ຜ່ານສະມາຄົມອັນນີ້ ມັນຄົງຈະເປັນການເຮັດໃຫ້ພວກເຮົາໄດ້ສາມາດຕິດຈອດກັນ ໄດ້ສາມາດແລກປ່ຽນຄວາມຮູ້ ປະສົບການຮ່ວມກັນ ຕະຫຼອດເຖິງການຊ່ວຍເຫຼືອຊຶ່ງກັນ ແລະກັນ ໄດ້ອີກດ້ວຍ.

ພວກເຮົາຈະໄດ້ສືບຕໍ່ຂະຫຍາຍ ຮັບເອົາສະມາຊິກອາດີດນັກສຶກສາ ບໍ່ວ່າຈະເປັນຜູ້ທີ່ຈົບມາຈາກທຶນການສຶກສາໃດໆ ກໍໄດ້ເຂົ້າມາເປັນດ້ວຍຄວາມຕື່ນຕົວສະໝັກໃຈ, ຂໍພຽງແຕ່ເຂົາຄົນນັ້ນ ຈະຕ້ອງເຄີຍໄດ້ຮັບການສຶກສາຈາກປະເທດຍີປຸ່ນມາຢ່າງຕ່ຳ 1ປີ ຂຶ້ນໄປ. ສະມາຄົມ ບໍ່ອາດສາມາດເປັນປະໂຫຍດໂດຍກົງໃຫ້ທ່ານໄດ້, ແຕ່ອາດຈະສາມາດຊ່ວຍເປັນປະໂຫຍດໃຫ້ແກ່ສັງຄົມສ່ວນລວມໄດ້ບໍ່ຫຼາຍກໍໜ້ອຍ.

ດັ່ງນັ້ນ ຈຶ່ງຫວັງຢ່າງຍິ່ງວ່າ ສອລຍ ພວກເຮົາຈະໄດ້ຮັບການຮ່ວມມື ຈາກອ້າຍນ້ອງພວກເຮົາໝົດທຸກຄົນເປັນຢ່າງດີ

ດ້ວຍຄວາມຮັກແພງຢ່າງສູງ

**ປະທານ ສອລຍ**

ບານເຕະ ມິດຕະພາບ

# ດວນ ແລ້ວ !!
# ໜ້າແຂ່ງ ຄັ້ງທຳອິດ



ການດວນໜ້າແຂ່ງ ຄັ້ງທຳອິດ ເກີດຂຶ້ນ ພາຍຫຼັງທີ່ຄະນະສະມາຄົມຖືກສ້າງຕັ້ງຂຶ້ນມາ ບໍ່ພໍເດືອນ. ພາຍໃຕ້ການເຂົ້າຮ່ວມຢ່າງມີບັນຍາກາດ ແບບສະບາຍສະບາຍ ຂອງທ່ານ ວິໄລວັນ ພົມເຂ ຮອງ ລັດຖະມົນຕີກະຊວງການຕ່າງປະເທດລາວ, ທ່ານ ຮະຊິ ໂມະໂຕະ ອິຊິໂອະ ເອກອັກຄະລາທູດ ຍີປຸ່ນປະຈຳ ລາວ ແລະ ບັນດາການຈັດຕັ້ງແລະແຂກທີ່ມີກຽດທັງ 2 ຝ່າຍ. ໃນວັນທີ 16/08/2003 ເວລາ 3:30 ທີ່ເດີ່ນ ກິລາແຫ່ງຊາດ, ພາຍຫຼັງທີ່ທ່ານຮອງລັດຖະມົນຕີກ່າວຈຸດປະສົງການແຂ່ງຂັນມິດຕະພາບແລ້ວ, ທ່ານ ທູດ ຍີ ປຸ່ນ ກໍ່ໄດ້ເປັນຜູ້ໂຍນໝາກບານເຂົ້າໄປໃນເດີ່ນ ເພື່ອໃຫ້ ການແຂ່ງຂັນດຳເນີນ, ບໍ່ໃຫ້ເວົ້າ ເລີຍ ທັງສອງຝ່າຍເລີ່ມ ເປີດເກມບຸກ ແບບກິລາວັດໃສ່ກັນໂລດ ເພາະບໍ່ວ່າແຕ່ ລະຝ່າຍໃຊ້ເກມໃດກັນແທ້. ແຕ່ທັງສອງຝ່າຍລ້ວນແລ້ວ ແຕ່ສວມວິຍານຂອງນັກກິລາ ຕ້ອງເອົາຊະນະມາຮອງ ທ້ອງໄວ້ເສຍກ່ອນ... ໃນທີ່ສຸດ ກໍເປັນອັນວ່າ ທີມອາດີດ ນັກສຶກສາລາວ ຊະນະທີມຣວມຄົນຍີປຸ່ນທີ່ນະຄອນວຽງຈັນໄປ **2-1**, ພວກເຮົາບໍ່ຂີ້ລ້າຍ. ສ່ວນຢູ່ເທິງແທ່ນນັ່ງ ຂອງຜູ້ຊົມ ບັນຍາກາດອັນເປັນກັນເອງ ຂອງຜູ້ໃຫຍ່ ທັງ ສອງຝ່າຍກໍແມ່ນສະໜິດສະໜົມກັນດີ ຫຼັງຈາກຈົບການ ການແຂ່ງຂັນກໍ່ຍັງບໍ່ຢາກເລີກລາກັນພຸ້ນລະ!!!



ແມ່ປ້ານ້າສາວ ຊາວຍີປຸ່ນ ກໍ່ແຫ່ກັນ ມາຊົມຢ່າງຫຼວງຫຼາຍ.

**CD**

ພວກ ເຮົາມີ CD ການເຄື່ອນໄຫວ
ຂອງສະມາຄົມ ໄວ້ບໍລິການພວກທ່ານ
ນອກນັ້ນ ຍັງບໍລິການສ້າງ CD ຕາມ
ຕ້ອງການຂອງທ່ານອີກດ້ວຍ !!

ຢ່າລືມຕິດຕໍ່ ສອລຍ

# ນ້ຳໃຈ ທີ່ ບໍ່ເຫືອດແຫ້ງ

**ຈາກ ທຸ່ນອ້າຍເອື້ອຍ ທີ່ຢູ່ຍີ່ປຸ່ນ**

## ເຖິງ ຄູອາຈານ ແລະ ທຸ່ນນ້ອງ ທີ່ກຳລັງຮຽນພາສາ ວ.ວ. ພ ມະຫາວິທະຍາໄລແຫ່ງຊາດລາວ




ອ.ຈ ວັນທອງ ຍອຍສາຍຄຳ



